ໂຄງການທັກສະສຳລັບວຽກງານທ່ອງທ່ຽວ LAO/029

# ຂໍ້ມູນຂະແໜງການທ່ອງທ່ຽວ ສຳລັບປີ 2019

## ພາບລວມຂອງການຈ້າງງານ ແລະ ທັກສະທີ່ຕ້ອງການຂອງຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ ໃນ ສປປ ລາວ

### ຂໍ້ມູນສຳລັບຜູ້ທີ່ກຳລັງຊອກຫາວຽກ

## ເລືອກເສັ້ນທາງຂອງຊີວິດທີ່ແຕກຕ່າງ - ເລືອກສາຍອາຊີບດ້ານການທ່ອງທ່ຽວ

ຂະແໜງການທ່ອງທ່ຽວແມ່ນຂະແໜງການທີ່ມີຄວາມຫຼາກຫຼາຍ, ເປີດໂອກາດດ້ານສາຍອາຊີບແບບໄລຍະຍາວໃຫ້ກັບບັນດາບຸກຄົນທີ່ມີຄວາມກະຕືລືລົ້ນ ແລະ ຕ້ອງການນຳໃຊ້ຄວາມຮູ້ຄວາມສາມາດຂອງຕົນເຂົ້າໃນການເຮັດວຽກໃນສະພາບແວດລ້ອມທີ່ຫຼາກຫຼາຍ. ບຸກຄະລາກອນທີ່ເຮັດວຽກໃນຂະແໜງທ່ອງທ່ຽວອາດເຮັດໜ້າທີ່ທັ້ງໃນ ແລະ ນອກສະຖານທີ່, ເຮັດວຽກຕາມໂມງເຮັດວຽກປົກກະຕິ ຫຼື ຕາມຕາຕະລາງທີ່ກຳນົດ, ເຮັດວຽກຕາມລະດູການ ຫຼື ຕະຫຼອດປີ. ຂະແໜງການທ່ອງທ່ຽວສ້າງໂອກາດດ້ານສາຍອາຊີບທີ່ໜ້າສົນໃຈ ແລະ ຫຼາກຫຼາຍ.

### ສາຍອາຊີບທີ່ໃຊ້ຄວາມຄິດສ້າງສັນ, ສາມາດປັບປ່ຽນໄດ້, ມີຄວາມມ່ວນຊື່ນໃນການເຮັດວຽກພ້ອມທັງໂອກາດໄດ້ໄປທ່ອງທ່ຽວ

ບັນດາສາຍອາຊີບໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມລ້ວນແລ້ວແຕ່ມີຄວາມໜ້າສົນໃຈ, ທ້າທ້າຍ ແລະ ຫຼາກຫຼາຍ. ສາມາດໃຫ້ບັນຍາກາດການເຮັດວຽກທີ່ມ່ວນຊື່ນ, ຕາຕະລາງເຮັດວຽກທີ່ປັບປ່ຽນໄດ້ ແລະ ຫຼາກຫຼາຍໂອກາດ ແຕ່ອາດໄດ້ເຮັດວຽກໜັກ ແລະ ຕ້ອງອຸທິດຕົນຕໍ່ໜ້າວຽກຂອງຕົນສູງ. ທ່ານອາດປະກອບອາຊີບເປັນພໍ່ຄົວ, ພະນັກງານນຳນຳທ່ຽວ, ນັກບັນຊີ, ຄົນຂັບລົດ, ຜູ້ຈັດການ, ພະນັກງານບໍລິການໃນສາຍການບິນຫຼືພະນັກງານອານາໄມ-ປະກອບມີຫຼາກຫຼາຍອາຊີບທີ່ເໝາະສົມກັບແຕ່ລະຄົນ. ບຸກຄະລາກອນທີ່ມີທັກສະໃນບັນດາສາຂາອາຊີບນີ້, ແລະ ນອກຈາກນີ້, ແມ່ນມີຄວາມຈຳເປັນຢ່າງຍິ່ງ. ຖ້າທ່ານສົນໃຈເຮັດວຽກຮ່ວມກັບຫຼາຍຄົນ ເຊັ່ນເຮັດວຽກເປັນທີມ ແລະ ສາມາດນຳໃຊ້ພະລັງງານຂອງທ່ານເຂົ້າໃນການປະກອບອາຊີບທີ່ມີຜົນຕອບແທນທີ່ດີ, ຂະແໜງທ່ອງທ່ຽວແມ່ນ ເໝາະສົມສຳລັບທ່ານ.



### ການຈະເລີນເຕີບໂຕໃນອະນາຄົດ

**ຄາດຄະເນວ່າຈະມີນັກທ່ອງທ່ຽວເຂົ້າມາຢ້ຽມຍາມປະເທດລາວ ສູງເຖິງ 4.7 ລ້ານຄົນພາຍໃນປີ 2020, ແລະ ຈະໃຊ້ຈ່າຍສູງ ເຖິງ 905 ລ້ານໂດລ່າສະຫະລັດ, ແລະ ພາຍໃນປີ 2025ຈຳນວນນັກທ່ອງທ່ຽວຈະເພີ່ມຂຶ້ນເຖິງ 5.5 ລ້ານຄົນ ແລະ ຈະມີລາຍຮັບສູງເຖິງ 1.15 ຕື້ໂດລ່າສະຫະລັດ.**




**ຈຳນວນນັກທ່ອງທ່ຽວ ແລະ ລາຍຮັບໃນປີ 2018**

ປະຈຸບັນ, ຂະແໜງການທ່ອງທ່ຽວໃນ ສປປ ລາວ ມີອັດຕາຈ້າງງານຢູ່ປະມານ 55,000 ຄົນໃນທົ່ວປະເທດ. ປະກອບມີ ບຸກຄົນທຸກອາຍຸ, ຄວາມສາມາດ ແລະ ທັກສະ. ເປັນອາຊີບທີ່ເຂົ້າເຖິງໄດ້, ມີຄວາມຢືດຍຸນໄດ້ ແລະ ສາມາດດຳເນີນການໃນຫຼາຍຂົງເຂດທຸລະກິດ.

# 5 ເຫດຜົນ (ທີ່ດີ) ທີ່ທ່ານຄວນພິຈາລະນາ ປະກອບສາຍອາຊີບ ໃນຂະແໜງອຸດສາຫະກຳທີ່ໜ້າສົນໃຈນີ້

**ທ່ານສາມາດກ້າວກະໂດດໄດ້ຢ່າງວ່ອງໄວໃນໜ້າທີ່ການງານ**
ມີພຽງບາງຂະແໜງການອຸດສາຫະກຳເທົ່ານັ້ນທີ່ມີຄວາມເປັນໄປໄດ້ໃນການກ້າວກະໂດດ ໃນໜ້າທີ່ການງານໄດ້ຢ່າງໄວວາ ຖ້າສົມທຽບຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ. ຕັ້ງເປົ້າໝາຍເພື່ອໃຫ້ໄດ້ເລື່ອນຕຳແໜ່ງ ໂດຍພະຍາຍາມເຮັດໜ້າທີ່ໃຫ້ດີທີ່ສຸດ ອີງໃສ່ທັກສະຄວາມສາມາດ ແລະ ເປີດໂອກາດຮຽນຮູ້ສິ່ງໃໝ່ໆ ພ້ອມຮັບເອົາໜ້າທີ່ຄວາມຮັບຜິດຊອບທີ່ສູງກ່ວາເກົ່າ. ຂະແໜງການທ່ອງທ່ຽວຍັງເປັນເວທີການເຮັດວຽກທີ່ເໝາະສົມໃຫ້ແກ່ບຸກຄົນທີ່ມີຄວາມປາຖະໜາທີ່ຈະລິເລີ່ມທຸລະກິດຂອງຕົນເອງໃນອະນາຄົດ.

**ທຸລະກິດປະກອບມີຫຼາກຫຼາຍຮູບແບບ ແລະ ຂະໜາດ**
ທ່ານຮູ້ບໍ່ວ່າ ຮ້ານກາເຟ, ໂຮງແຮມຂະໜາດໃຫຍ່ ແລະ ສາຍການບິນສາກົນ ມີຫຍັງຄ້າຍຄືກັນ? ພວກເຂົາ ລ້ວນແລ້ວແຕ່ຢູ່ໃນທຸລະກິດການທ່ອງທ່ຽວ. ພວກເຂົາຕ່າງຕ້ອງການບຸກຄະລະກອນທີ່ຄຸນນະວຸດທິ ນັບຕັ້ງແຕ່ພະນັກງານເຮັດວຽກດຳເນີນງານຈົນຮອດຜູ້ບໍລິຫານ, ຈະປະກອບມີໂອກາດດ້ານການຝຶກອົບຮົມ, ການພັດທະນາຄວາມຮູ້ ແລະ ທັກສະ ລວມທັງໂອກາດທີ່ເປັນໄປໄດ້ໃນການພັດທະນາ ແລະ ເຕີບໂຕໃນອົງກອນແບບບໍ່ມີຂໍ້ຈຳກັດ.

**ເຮັດວຽກໃນອຸດສາຫະກຳທີ່ ເຕັມໄປດ້ວຍຄວາມມ່ວນຊື່ນ**
ສາຍອາຊີບໃນຂະແໜງການທ່ອງທ່ຽວຈະບໍ່ຄືກັນກັບບັນດາວຽກທົ່ວໄປ - ຈະບໍ່ມີມື້ໃດທີ່ຄືກັນ. ຖ້າທ່ານເປັນຄົນມັກສັງຄົມ ແລະ ທ່ານມັກພົບປະບຸກຄົນ ທ່ານຈະມັກຮັກເຮັດວຽກໃນຕຳແໜ່ງພະແນກບໍລິການພາກສ່ວນໜ້າ (ຮັບແຂກ). ແຕ່ຖ້າທ່ານມີຄວາມປະສົງບໍ່ຢາກພົບປະຫຼາຍຄົນ - ທ່ານກໍ່ສາມາດເຮັດໃນຕຳແໜ່ງທີ່ຢູ່ເບື້ອງຫຼັງ ເຊັ່ນໃນຫ້ອງຄົວ, ການບັນຊີ ແລະ ອື່ນໆ.

**ທ່ານສາມາດສ້າງລາຍໄດ້ ໃນຂະນະທີ່ກຳລັງຮຽນ**
ຂັ້ນເງິນເດືອນໃນຂະແໜງການທ່ອງທ່ຽວ ແມ່ນຂຶ້ນຢູ່ກັບປັດໃຈດ້ານປະເພດຂອງວຽກທີ່ທ່ານເຮັດ, ວຸດທິການສຶກສາ ແລະ ການຝຶກອົບຮົມທີ່ຜ່ານມາ ແລະ ປະສົບການຂອງທ່ານ. ໂດຍທົ່ວໄປແລ້ວ, ຕຳແໜ່ງລິເລີ່ມໃນຂະແໜງການນີ້ແມ່ນ ມີເງິນເດືອນຂັ້ນເລີ່ມຕົ້ນທີ່ 1,100,000 ກີບຕໍ່ເດືອນ. ເມື່ອເວລາທີ່ທ່ານມີທັກສະ ແລະ ໄດ້ຮັບຕຳແໜ່ງສູງຂຶ້ນ ຖານເງິນເດືອນກໍ່ຈະສູງໄປຕາມ. ນອກນັ້ນ, ຍັງລວມມີຜົນປະໂຫຍດອື່ນໆທີ່ຖືວ່າເປັນເລື່ອງປົກກະຕິຂອງການດຳເນີນງານ ໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ ເຊັ່ນ: ມີທີ່ພັກເຊົາໃຫ້ພະນັກງານ, ອາຫານ, ຊຸດເຄື່ອງແບບ ແລະ ຄ່າບໍລິການ.

**ໂລກໃບນີ້ມີໂອກາດຫຼາກຫຼາຍ ທ່ານສາມາດຄວ້າທຸກໂອກາດທີ່ທ່ານຕ້ອງການ**
ປະສົບການໃນຂະແໜງການທ່ອງທ່ຽວ ສາມາດເປັນດັ່ງໜັງສືຜ່ານແດນທີ່ນຳພາທ່ານອອກສູ່ໂລກອັນກ້ວາງໃຫຍ່ໄດ້. ຖ້າທ່ານສາມາດຮັບຜິດຊອບບາ, ເສີບເຄື່ອງດື່ມ, ແຕ່ງອາຫານແຊບ, ສາມາດຈັດກຸ່ມທົວ ຫຼື ບໍລິຫານໂຮງແຮມ, ທ່ານຈະບໍ່ໃຊ້ເວລາດົນເພື່ອຊອກຫາວຽກເຮັດ. ບຸກຄະລະກອນຂະແໜງການທ່ອງທ່ຽວ ແມ່ນເປັນທີ່ຕ້ອງການຂອງສັງຄົມລາວ ແລະ ໃນຕ່າງປະເທດ.

ຮຽນຮູ້ພາສາໃໝ່ - ການພັດທະນາຄວາມຊຳນິຊຳນານຂອງຕົນໃນພາສາຕ່າງປະເທດສາມາດເພີ່ມມູນຄ່າອັນໃຫຍ່ຫຼວງໃຫ້ແກ່ທ່ານ ເປັນຕົ້ນແມ່ນຄວາມສາມາດໃນການຈ້າງງານ. ໃນບັນດາຕຳແໜ່ງທີ່ຕ້ອງໄດ້ພົວພັນກັບນັກທ່ອງທ່ຽວຕ່າງປະເທດໂດຍກົງ, ທັກສາດ້ານພາສາແມ່ນມີຄວາມສຳຄັນຢ່າງຍິ່ງ ເພື່ອສາມາດມອບປະສົບການທີ່ດີໃຫ້ແກ່ນັກທ່ອງທ່ຽວ.
ທ່ານສາມາດພັດທະນາທັກສະດ້ານພາສາອັງກິດຂອງທ່ານຜ່ານຮູບແບບການຮຽນຮູ້ແບບມ່ວນຊື່ນ ສະໜຸກສະໜານ, ໂດຍການດາວໂຫລດແອບພິເຄຊັນ ຮຽນພາສາອັງກິດສຳລັບການທ່ອງທ່ຽວ ແລະ ການໂຮງແຮມຟຣີ ທີ່ມີຊື່ວ່າ "ສະບາຍດີພາສາອັງກິດ" ທີ່ຮ້ານຄ້າ App store ຫຼື Play store ໂດຍພິມຄຳວ່າ "Sabaidee English".

## ສະຖິຕິຕົວເລກວຽກ ໃນຂະແໜງ ການທ່ອງທ່ຽວ ແລະ ການໂຮງແຮມ ປີ 2018



| | |
|---|---|
| ພະນັກງານອານາໄມ / ແມ່ບ້ານ | 4,437 |
| ພະນັກງານເສີບ | 4,265 |
| ຜູ້ບໍລິຫານ ແລະ ຫົວໜ້າຜູ້ບໍລິຫານ | 2,664 |
| ພະນັກງານຕ້ອນຮັບໂຮງແຮມ/ລີຊອດ/ເຮືອນພັກ | 2,189 |
| ພໍ່ຄົວ | 2,051 |
| ພະນັກງານຮັກສາຄວາມປອດໄພ | 1,853 |
| ຜູ້ຊ່ວຍຂາຍເຄື່ອງໃນຮ້ານຄ້າ | 1,716 |
| ນັກບັນຊີ/ ພະນັກງານບັນຊີ/ຈົດບັນທຶກ | 1,145 |
| ພະນັກງານນຳທ່ຽວ | 956 |
| ຜູ້ຈັດການໂຮງແຮມ/ລີຊອດ/ເຮືອນພັກ | 870 |
| ພະນັກງານຜູ້ຊ່ວຍຫ້ອງຄົວ | 808 |
| ທີ່ປຶກສາ ແລະ ພະນັກງານແນະນຳການທ່ອງທ່ຽວ | 642 |
| ຜູ້ຈັດການຮ້ານອາຫານ/ພັບ/ບາ/ສະຖານທີ່ບັນເທີງ | 287 |
| ພໍ່ຄົວ | 175 |
| ພະນັກງານເສີບເຄື່ອງດື່ມ | 171 |
| ພະນັກງານຍົກກະເປົາ | 108 |
| ຫົວໜ້າຜູ້ຈັດການອານາໄມ ແລະ ຮັກສາຄວາມສະອາດ | 107 |

## ສະຖິຕິຕົວເລກ ການຈ້າງງານ ໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ ປີ 2018 ໃນແຕ່ລະແຂວງ



| | |
|---|---|
| ນະຄອນຫຼວງວຽງຈັນ | 9,652 |
| ນະຄອນຫຼວງພະບາງ | 8,389 |
| ໄຊຍະບູລີ | 4,269 |
| ຈຳປາສັກ | 3,094 |
| ຄຳມ່ວນ | 2,840 |
| ແຂວງວຽງຈັນ | 2,661 |
| ສະຫວັນນະເຂດ | 2,387 |
| ບໍ່ແກ້ວ | 1,367 |
| ບໍລິຄຳໄຊ | 1,065 |
| ອຸດົມໄຊ | 958 |

| | |
|---|---|
| ສາລະວັນ | 728 |
| ຫຼວງນ້ຳທາ | 547 |
| ຊຽງຂວາງ | 500 |
| ຫົວພັນ | 476 |
| ໄຊສົມບູນ | 462 |
| ອັດຕະປື | 447 |
| ເຊກອງ | 299 |
| ຜົ້ງສາລີ | 265 |

ຄົ້ນຫາຕຳແໜ່ງຫວ່າງ - ເພື່ອພັດທະນາສາຍອາຊີບຂອງທ່ານ, ປະຈຸບັນນີ້ ເວັບໄຊຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະກອບມີຊ່ອງທາງການແລກປ່ຽນຂໍ້ມູນຕະຫຼາດແຮງງານ ສຳລັບຜູ້ທີ່ກຳລັງຊອກວຽກ ແລະຜູ້ປະກອບການ. ທ່ານສາມາດນຳໃຊ້ເພື່ອຊອກຫາຕຳແໜ່ງຫວ່າງໃນປະຈຸບັນແລະຂໍ້ມູນທີ່ກ່ຽວຂ້ອງເພື່ອຊ່ວຍທ່ານຊອກຫາວຽກທີ່ເໝາະສົມ.

# ມາຟັງເລື່ອງເລົ່າ ຈາກບັນດາບຸກຄົນໜຸ່ມ ທີ່ໄດ້ລິເລີ່ມບາດກ້າວທຳອິດໃນອາຊີບຂອງພວກເຂົາ



**ກະຕ່າຍ**
*"ມັນເປັນພຽງໂອກາດເຂົ້າຮ່ວມຝຶກອົບຮົມຄັ້ງດຽວທີ່ຂ້ອຍໄດ້ເຂົ້າຮ່ວມ"* ນາງກ່າວ ຂ້ອຍບໍ່ໄດ້ເຂົ້າຮຽນຊັ້ນມັດທະຍົມຕອນປາຍ, ສະນັ້ນມັນເປັນໂອກາດທີ່ສຳຄັນທີ່ສຸດຂອງຂ້ອຍ. ກະຕ່າຍໄດ້ເຂົ້າຮ່ວມຝຶກອົບຮົມໃນໂຄງການຂົວຕໍ່ສູ່ສາຍອາຊີບ (Job Bridge) ໄລຍະເວລາ 10 ອາທິດ ທີ່ຖືກອອບແບບມາເພື່ອຊ່ວຍໃຫ້ນັກສຳມະນາກອນສາມາດໄດ້ມີວຽກເຮັດ ໃນຂະແໜງທ່ອງທ່ຽວ ແລະ ການໂຮງແຮມ. ກະຕ່າຍໄດ້ວຽກທຳອິດເປັນພະນັກງານຜູ້ຊ່ວຍຄົວ ທີ່ຮ້ານ Earth Bar, ເປັນບາທີ່ໄດ້ຮັບຄວາມນິຍົມໃນນະຄອນຫຼວງວຽງຈັນ, ແລະ ໃນໄລຍະມໍ່ໆມານີ້ ນາງໄດ້ຖືກເລື່ອນຕຳແໜ່ງເປັນຫົວໜ້າແມ່ຄົວ.



**ອາທໍ່**
ອາທໍ່ເປັນພະນັກງານເສີບທີ່ໂຮງແຮມອາມັນຕາກາ, ເຊິ່ງເປັນໂຮງແຮມຫລູທີ່ນະຄອນຫຼວງພະບາງ. *"ຖ້າມີຄົນຖາມວ່າຂ້ອຍໄດ້ວຽກນີ້ແນວໃດ, ຂ້ອຍຂໍຕອບວ່າຂ້ອຍໄດ້ເລືອກຫຼັກສູດຝຶກອົບຮົມທີ່ຖືກຕ້ອງ."* ພາຍຫຼັງທີ່ຮຽນຈົບຊັ້ນມັດທະຍົມ, ອາທໍ່ໄດ້ເຂົ້າຝຶກອົບຮົມໃນຫຼັກສູດ 3-ເດືອນ ໃບປະກາດ ຊັ້ນຕົ້ນລະດັບ 1 ທີ່ສູນຝຶກອົບຮົມລານິດຫຼວງພະບາງ.

ທັງກະຕ່າຍແລະອາທໍ່ ໄດ້ສຳເລັດການຝຶກອົບຮົມວິຊາຊີບທີ່ເສີມສ້າງທັກສະທີ່ຈຳເປັນສຳລັບການເຮັດວຽກທຳອິດຂອງພວກເຂົາ ໃນຂະແໜງ ການທ່ອງທ່ຽວ ແລະ ການໂຮງແຮມ. ຖ້າພວກເຂົາສາມາດເຮັດໄດ້, ທ່ານກໍ່ສາມາເຮັດໄດ້ເຊັ່ນດຽວກັນ!

## ການເຕີບໂຕຂອງນັກທ່ອງທ່ຽວຈີນ

ຈຳນວນນັກທ່ອງທ່ຽວຈີນເຂົ້າມາຢ້ຽມຢາມລາວແມ່ນກຳລັງເພີ່ມຂຶ້ນ. ໃນປີ 2018, ມີນັກທ່ອງທ່ຽວຈາກຈີນເຂົ້າມາລາວ 805,000 ຄົນ (ເພີ່ມຂຶ້ນ 26% ຈາກປີ 2017) ຫຼື ເທົ່າກັບ 19% ຂອງນັກທ່ອງທ່ຽວທີ່ເດີນທາງມາຢ້ຽມຢາມລາວທັງໝົດ ແລະ ເທົ່າກັບ 19% ຂອງລາຍຈ່າຍນັກທ່ອງທ່ຽວທັງໝົດ. ສົມທຽບກັບ 6 ປີກ່ອນມີພຽງ 6.5% ຂອງນັກທ່ອງທ່ຽວທັງໝົດ ແລະ 4% ຂອງລາຍຈ່າຍນັກທ່ອງທ່ຽວ. ຈຳນວນເງິນທີ່ຈ່າຍແຕ່ລະວັນ ໂດຍນັກທ່ອງທ່ຽວຈີນແມ່ນເພີ່ມຂຶ້ນຢ່າງຫຼວງຫຼາຍໃນປີ 2018 ເມື່ອສົມທຽບກັບຊຸມປີຜ່ານມາ. ພວກເຂົາໃຊ້ຈ່າຍປະມານ 80 ໂດລ່າ ສະຫະລັດ ທຽບເທົ່າກັບ 90 ໂດລ່າທີ່ໃຊ້ຈ່າຍ ໂດຍນັກທ່ອງທ່ຽວຕ່າງປະເທດ. ຄາດຄະເນວ່າຈຳນວນນັກທ່ອງທ່ຽວຈາກປະເທດຈີນຍັງຄົງສືບຕໍ່ເພີ່ມຂຶ້ນເຮັດໃຫ້ກາຍເປັນຕະຫຼາດທ່ອງທ່ຽວທີ່ມີມູນຄ່າ.




## ສ້າງຄວາມພ້ອມຕ້ອນຮັບນັກທ່ອງທ່ຽວຈີນ - ພັດທະນາອາຊີບຂອງທ່ານ

ອີງຕາມການຄາດຄະເນເພີ່ມຂຶ້ນຂອງຈຳນວນນັກທ່ອງທ່ຽວຈີນ, ບັນດາຫົວໜ່ວຍທຸລະກິດຕ້ອງມີຄວາມພ້ອມເພື່ອຕ້ອນຮັບນັກທ່ອງທ່ຽວຈີນ. ໄດ້ພັດທະນາແຜນງານການຝຶກອົບຮົບສຳລັບສະຖາບັນເຕັກນິກວິຊາຊີບ ແລະ ຫົວໜ່ວຍທຸລະກິດທ່ອງທ່ຽວ ເພື່ອເສີມສ້າງຈິດສຳນຶກ ແລະ ຄວາມເຂົ້າໃຈຕໍ່ກັບບັນດາແນວໂນ້ມຂອງຕະຫຼາດທີ່ກຳລັງເຕີບໂຕນີ້*. ທ່ານສາມາດພັດທະນາອາຊີບການງານຂອງທ່ານໄດ້ໂດຍການຮັບຮູ້ບັນດາແນວໂນ້ມ ແລະ ເລືອກສາຍຮຽນ ແລະ ເຮັດວຽກໃນຂົງເຂດທີ່ສາມາດມອບປະສົບທີ່ເບີກບານຍິ່ງຂຶ້ນໃຫ້ແກ່ນັກທ່ອງທ່ຽວຈີນ.

# ບັນດາຄຳຖາມທີ່ຖືກຖາມປະຈຳ

### ຂ້ອຍຈະສາມາດຊອກຫາວຽກເຮັດໃນຂະແໜງການທ່ອງທ່ຽວໄດ້ແນວໃດ?

ຂະແໜງການທ່ອງທ່ຽວປະກອບມີຫຼາກຫຼາຍທຸລະກິດ ແລະ ການໃຫ້ບໍລິການ, ປະກອບມີຫຼາຍຫົນທາງເພື່ອໄດ້ຮັບການຈ້າງງານ ໂດຍຂຶ້ນກັບຄວາມສາມາດ ແລະ ປະສົບການຂອງທ່ານ. ຫຼາຍຕຳແໜ່ງແມ່ນປະກາດອອນລາຍ; ເທິງເວັບໄຊ ແລະ ສື່ສັງຄົມອອນລາຍ, ຫຼື ເວັບໄຊຂອງໂຮງແຮມ ແລະ ໜ່ວຍງານຈັດຫາງານ ລວມທັງເວັບໄຊຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ການເຂົ້າພົບປະໂອ້ລົມກັບຜູ້ປະກອບການໂດຍກົງ, ຕົວຢ່າງ ສອບຖາມຜູ້ຈັດການກ່ຽວກັບບັນດາຕຳແໜ່ງຫວ່າງ. ໄປຮ່ວມງານຕະຫຼາດນັດແຮງງານ ແລະ ຕ້ອງໄດ້ກະກຽມເປັນຢ່າງດີ-ທ່ານຕ້ອງການຢາກສ້າງຄວາມປະທັບໃຈຄັ້ງແລກ.

### ຕຳແໜ່ງລິເລີ່ມແມ່ນຫຍັງ?

ຕຳແໜ່ງລິເລີ່ມສ່ວນໃຫຍ່ແມ່ນຮຽກຮ້ອງໃຫ້ມີການສຶກສາແລະຝຶກອົບຮົມທີ່ບໍ່ສູງເກີນໄປ. ຕຳແໜ່ງເຫຼົ່ານີ້ເໝາະສົມກັບບຸກຄົນທີ່ກຳລັງລິເລີ່ມວຽກທຳອິດໃນຂະແໜງທ່ອງທ່ຽວ ຫຼື ການບໍລິການ. ບັນດາຕຳແໜ່ງລິເລີ່ມອາດລວມມີຜູ້ຊ່ວຍຫ້ອງຄົວ, ພະນັກງານເສີບ ແລະ ຕົວແທນຜູ້ໃຫ້ບໍລິການລູກຄ້າໃນໂຮງແຮມ, ຮ້ານອາຫານ ຫຼື ສະຖານທີ່ທ່ອງທ່ຽວຕ່າງໆ. ປະສົບການເຫຼົ່ານີ້ອາດມີຄວາມສຳຄັນຕໍ່ກັບການພັດທະນາໜ້າທີ່ຕຳແໜ່ງໃນອະນາຄົດ.

### ຂ້ອຍຈຳເປັນຕ້ອງມີຄຸນນະວຸດບໍ່?

ເຖິງແມ່ນວ່າແຕ່ລະໜ້າທີ່ ແລະ ຄວາມຮັບຜິດຊອບຈະແຕກຕ່າງກັນອອກໄປ, ອາຊີບໃນຂະແໜງການທ່ອງທ່ຽວ ແລະ ການບໍລິການໂດຍທົ່ວໄປແລ້ວຮຽກຮ້ອງໃຫ້ມີທັກສະດ້ານການບໍລິການລູກຄ້າທີ່ດີ ແລະ ຄວາມສາມາດໃນການສື່ສານ ແລະ ເຮັດວຽກກັບຜູ້ອື່ນໄດ້ດີ. ນີ້ເປັນຈຸດເລີ່ມຕົ້ນທີ່ດີ. ການມີຄຸນນະວຸດທີ່ເໝາະສົມສາມາດຊ່ວຍໃຫ້ທ່ານສາມາດໄດ້ວຽກທຳອິດ ແລະ ຍັງສາມາດພັດທະນາໜ້າທີ່ການງານຂອງທ່ານໄດ້.

### ຂ້ອຍຄວນຮຽນຫຼັກສູດໃດ?

ຫຼັກສູດທີ່ເໝາະສົມແມ່ນຂຶ້ນກັບລະດັບການສຶກສາ, ຄວາມສົນໃຈ ແລະ ໄລຍະເວລາທີ່ທ່ານສາມາດຮ່ຳຮຽນ. ຖ້າທ່ານຮຽນແບບບໍ່ເຕັມເວລາ, ທ່ານສາມາດຮຽນ ແລະ ເຮັດວຽກໄປພ້ອມກັນ. ຫຼື ທ່ານສາມາດຮຽນຫຼັກສູດເຕັກນິກວິຊາຊີບໄລຍະສັ້ນສາມເດືອນ ແລ້ວເລີ່ມວຽກໄດ້ເລີຍ. ຫຼື ບາງທີທ່ານຢາກຮຽນເຕັມເວລາທີ່ສະຖາບັນການສຶກສາຂອງລັດໄດ້ແກ່ ໂຮງຮຽນ/ວິທະຍາໄລເຕັກນິກວິຊາຊີບ ແລະ ຝຶກອົບຮົມ. ມີຫຼາຍຫຼາຍທາງເລືອກທີ່ທ່ານສາມາດເລືອກຮຽນໄດ້.

**ສຶກສາເພື່ອໃຫ້ໄດ້ຄຸນນະວຸດ - ເຕີບໂຕໃນໜ້າທີ່ການງານ**

ຖ້າທ່ານກຳລັງຄິດຈະເຂົ້າຮຽນທີ່ວິທະຍາໄລ?ປະກອບມີຫລາຍຫຼັກສູດທາງເລືອກທີ່ສາມາດໃຫ້ທ່ານເລີ່ມຕົ້ນໄດ້. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂຮງຮຽນເຕັກນິກອາຊີວະສຶກສາ ແລະ ຝຶກອົບຮົມ (TVET) ຂະແໜງການທ່ອງທ່ຽວ ແລະ ບໍລິການ, ທ່ານສາມາດເຂົ້າໄປເບິ່ງທີ່ເວັບໄຊ www.tvet-laos.org ແລະ ດາວໂຫລດແອບ TVET
ໄດ້ທີ່ App Store ໂດຍພິມຄຳວ່າ: TVET ແລະ
Play Store ໂດຍພິມຄຳວ່າ: TVET LAO

### ແລ້ວຂ້ອຍສາມາດຮຽນໄດ້ຢູ່ໃສ?

ທ່ານສາມາດລົງທະບຽນຮຽນໃນຫຼັກສູດໃນທົ່ວທຸກຂົງເຂດໃນສປປ.ລາວ. ບັນດາທາງເລືອກຫຼາກຫຼາຍທີ່ສຸດແມ່ນຢູ່ທີ່ໂຮງຮຽນ/ວິທະຍາໄລເຕັກນິກວິຊາຊີບ ແລະ ຝຶກອົບຮົມຂອງລັດ. ນອກນັ້ນ, ຍັງປະກອບມີຫຼັກສູດຝຶກອົບຮົມຂອງວິທະຍາໄລເອກະຊົນ ແລະ ຜູ້ໃຫ້ຝຶກອົບຮົມຕ່າງໆ, ສູນພັດທະນາສີມືແຮງງານ, ສະຫະພັນແມ່ຍິງ, ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ.

### ຂ້ອຍຊິຫາເງິນໄດ້ຫຼາຍປານໃດ?

ເງິນເດືອນມີຂຶ້ນຢູ່ກັບລະດັບທັກສະຄວາມສາມາດ ແລະ ຄຸນນະວຸດທີ່ແຕ່ລະວຽກຮຽກຮ້ອງ. ທ່ານອາດສາມາດໄດ້ຈາກເງິນເດືອນຂັ້ນຕ່ຳ 1,100,000 ກີບ/ເດືອນ ສຳລັບບັນດາຕຳແໜ່ງລິເລີ່ມ. ເມື່ອເວລາທີ່ທ່ານມີທັກສະ ແລະ ປະສົບການເພີ່ມຂຶ້ນ, ທ່ານກໍ່ຈະຖືກເລື່ອນຕຳແໜ່ງ. ແລະ ຖ້າໄດ້ຮັບຄວາມຮັບຜິດຊອບສູງຂຶ້ນ, ທ່ານກໍ່ຈະໄດ້ຮັບເງິນເດືອນດີ.

**ບັນດາຜູ້ໃຫ້ບໍລິການດ້ານການສຶກສາ ແລະ ຝຶກອົບຮົມໃນຂະແໜງທ່ອງທ່ຽວ ແລະ ການໂຮງແຮມ ທັງພາກລັດ ແລະ ເອກະຊົນ.**




TVET= ເຕັກນິກວິຊາຊີບ
IVET= ເຕັກນິກວິຊາຊີບແບບປະສົມ


ຂໍ້ມູນຖະແຫຼງການດ້ານຕະຫຼາດແຮງງານສະບັບນີ້ ແມ່ນອີງໃສ່ຜົນວິໄຈຂອງການສຳຫຼວດການຈ້າງງານ ແລະ ສີມືແຮງງານໃນຂະແໜງທຸລະກິດທ່ອງທ່ຽວ ແລະ ການບໍລິການໃນ ສປປ ລາວ ປະຈຳປີ 2018 ເຊິ່ງໄດ້ຮັບການສະໜັບສະໜູນໂດຍໂຄງການທັກສະສຳລັບວຽກງານການທ່ອງທ່ຽວ (ລາວ/029).

ໂຄງການທັກສະສຳລັບວຽກງານທ່ອງທ່ຽວໃຫ້ການສະໜັບສະໜູນດ້ານເຕັກນິກວິຊາຊີບ ແລະ ຝຶກອົບຮົມ ແລະ ການພັດທະນາສີມືແຮງງານໃນຂະແໜງການທ່ອງທ່ຽວ ແລະ ການບໍລິການໃນ ສປປ ລາວ. ແລະ ໂຄງການໄດ້ສຸມຄວາມພະຍາຍາມຊ່ວຍເຫຼືອບັນດາບຸກຄົນທີ່ດ້ອຍໂອກາດ ເພື່ອໃຫ້ເຂົາເຈົ້າໄດ້ຮັບທັກສະຄວາມສາມາດທີ່ຈຳເປັນຕໍ່ການເຮັດວຽກໃນໂຮງແຮມ, ຮ້ານອາຫານ ແລະ ໃນລະບົບເສດຖະກິດທ່ອງທ່ຽວ. ຫຼາຍແຜນງານລິເລີ່ມທີ່ໄດ້ອ້າງອີງໃນຂໍ້ມູນຖະແຫຼງການນີ້ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການ.

ໂຄງການທັກສະສຳລັບວຽກງານທ່ອງທ່ຽວໄດ້ຮັບເງິນແຫຼ່ງທຶນຮ່ວມ ໂດຍລັດຖະບານແຫ່ງ ສປປ ລາວ, ລັດຖະບານແຫ່ງລາດຊະອານາຈັກລຸກຊຳບວກ, ແລະ ລັດຖະບານສະວິດເຊີແລນ, ຜ່ານການຈັດຕັ້ງປະຕິບັດໂດຍກະຊວງສຶກສາທິການ ແລະ ກິລາແຫ່ງ ສປປ ລາວ ແລະ ອົງການພັດທະນາ ແລະ ຮ່ວມມືແຫ່ງປະເທດລຸກຊຳບວກ ປະຈຳລາວ (LuxDev).



ໂຄງການທັກສະສຳລັບວຽກງານທ່ອງທ່ຽວ (LAO/029)
ຖະໜົນຊຸມບູລົມ, ບ້ານວັນຈັນ, ເມືອງຈັນທະບູລີ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ +856 21 253 156 ແຟັກ +856 21 253 157
ອີເມວ: lao029@luxdev.lu



ຈັດພິມໂດຍ: ກະຊວງສຶກສາທິການ ແລະ ກິລາ
ຖະໜົນລ້ານຊ້າງ, ບ້ານຊຽງຍືນ, ເມືອງຈັນທະບູລີ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ +856 21 216 004


LUX DEV
Luxembourg Development Cooperation Agency


**ຕຸລາ 2019**